ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໔໕/ປພຖຊ/໔໔໐໔໐໙**

# ບົດຄວາມ

## ຕອບໂຕ້ທ່ານສຸທັມ ສາກົນນິຍົມ

## ທູດລາວ ປະຈຳປະເທດ Belgique. (ຕອນຈົບ).

ພວກເຮົາພາກັນມາເບິ່ງຜົນສະທ້ອນ ຈາກຕຳນານ ຊ້າງເຜືອກ-ຫີນພູ-ງູໃຫຍ່ ຂອງພັກຣັດ.... ມັນຕຣົງກັນຂ້າມກັບຄວາມເປັນຈິງທຸກຢ່າງ! ຕຳຣາຊ້າງເຜືອກນັ້ນ ຕ້ອງແມ່ນ ຊ້າງເຜືອກງານົມ. ຊ້າງຂອງທ່ານ ຊໍ້າພັກແມ່ນຊ້າງແມ່ດ່ອນ, ບໍ່ຕ່າງຫຍັງກັບຄວາຍດ່ອນ. ແຕ່ ພັກຣັດຊໍ້າພັດໃຫ້ປະຊາຊົນ ງົມງາຍຂາບໄຫວ້! ແຫ່ກັນທົ່ວບ້ານທົ່ວເມືອງ. ສ່ວນວ່າຫີນພູນັ້ນ, ໃນໜັງສືສຽວສວາດ ເພິ່ນໄດ້ໝາຍເຖິງການຕໍ່ສູ້ຜເດັດການຂຸນເສິກສັກດີນາ ຮຽກຮ້ອງໃຫ້ປວງຊົນ ໄດ້ລຸກຂຶ້ນມາ ຕໍ່ສູ້ອຳນາດຜເດັດການໃຫ້ໝົດໄປ ແລະອຳນາດ ຂອງປະຊາຊົນ ກໍຈະພຸ່ງພົ້ນຂຶ້ນມາ, ປຽບເໝືອນ ຫີນພູນັ້ນເອງ. ສ່ວນວ່າງູໃຫຍ່ນັ້ນ, ມັນທຽບກັນບໍ່ຕິດ. ງູ ແມ່ນປະເພດສັດເລືອຄານ, ເກີດມາໄດ້ 50-60 ລ້ານປີມາແລ້ວ, ແຕ່ຖນົນຫີນທາງ ແມ່ນຄົນ ເປັນຜູ້ສ້າງຂຶ້ນ.

ການທີ່ມີຂົວຂ້າມນໍ້າຂອງ, ມີທາງຣົຖໄຟ, ມີຖນົນເຊື່ອມຕໍ່ປະເທດເພື່ອນບ້ານ ທີ່ຮັ່ງມີກວ່າ, ທີ່ເຂັ້ມແຂງກວ່າໃນທຸກໆດ້ານ, ມັນກໍເປັນພຽງ ການຕໍ່ທໍ່ໃຫ້ຕ່າງຊາດ ເຂົ້າມາດູດກິນເລືອດ ຂອງ ປະຊາຊົນເທົ່ານັ້ນເອງ. ເມືອງລາວ ກໍກາຍເປັນພຽງຕລາດຈຳໜ່າຍສິນຄ້າ, ປະຊາຊົນລາວກໍກາຍເປັນພຽງລູກຄ້າຂອງບໍຣິສັທຕ່າງຊາດ ໄປໃນຕົວ. ຄວາມສຸຂ, ຄວາມສດວກສບາຍ, ຜົນປໂຍດທີ່ໄດ້ຮັບ ກໍລ້ວນແລ້ວແຕ່ຜູ້ມີອຳນາດອິດທິພົນ, ນັກທຸຣະກິດການຄ້າ, ນັກລົງທຶນ, ບໍ່ແມ່ນ ປະຊາຊົນສາມັນທັມດາ. ເຊັ່ນ: ຕອນແລງມາ, ພວກເຂົາ ຮ່ວມກັນ ຄ້າມະນຸດ, ເອົາຣົຖແວ່ນດຳ ໃສ່ລູກເສັຫລານສາວ ຂ້າມຜ່ານຂົວ ມິຕພາບລາວ-ໄທຍ ໄປລ້ຽງດູປູເສື່ອ ກັບນັກທຸຣະກິດຕ່າງຊາດ ທີ່ຄົບຄິດ ຮ່ວມກັນທຳທຸຣະກິດຂາຍຊາດ ກັບຜູ້ມີອຳນາດ ອິດທິພົນໃນລາວ.

ທ່ານທູດ ໄດ້ເນັ້ນໜັກເຖິງຄວາມຮັບຮູ້ ຂອງພນັກງານພັກຣັດ ວ່າ "ຍັງບໍ່ເລີກເຊື່ງ, ເວົ້າເນວນຶ່ງ ແຕ່ເຮັດໄປອີກເນວນຶ່ງ". ພວກເຮົາເຫັນວ່າ ທ່ານທູດເວົ້າດັ່ງນັ້ນ, ແມ່ນບໍ່ຖືກຕ້ອງ! ເພາະພວກເຂົາ ເຮັດ ຕາມທີ່ພັກຣັດພາເຮັດທຸກຢ່າງ! ທ່ານໄກສອນ ພົມວິຫານ ໄດ້ສັ່ງໄລ່ພນັກງານຫລາຍຄົນທີ່ສເນີວ່າ "ທຸກ ຍາກ ບໍ່ກຸ້ມກິນ, ບໍ່ກຸ້ມຄອບຄົວ" ໃຫ້ອອກຈາກການ. ທ່ານເວົ້າວ່າ ເອົາເຂົ້າມາ ຢູ່ບ່ອນມີຢູ່ມີກິນ ແລ້ວ! ຍັງບໍ່ຮູ້ຢູ່ ບໍ່ຮູ້ກິນ! ກໍໃຫ້ເຂົາອອກໄປເປັນປະຊາຊົນສາ໋! ຕໍ່ຈາກນັ້ນມາ, ຂບວນການ ສໍ້ໂກງກິນ ຊາດ -ສໍ້ຣາດບັງຫລວງ ກໍໄດ້ແຜ່ລະບາດອອກໄປທຸກຫົນທຸກແຫ່ງ, ທຸກກະຊວງທະບວງກົມ. ຜູ້ມີ ອິດທິພົນ ກໍສໍ້ໂກງການຊ່ວຍເຫລືອຕ່າງປະເທດ ໃນໂຄງການໃຫຍ່ໆ, ເປັນຕົ້ນ: ສ້າງເຂື່ອນ, ຂຸດຄົ້ນບໍ່ແຮ່ ສໍາປະທານທີ່ດິນ, ສໍາປະທານເຂດເສຖກິດພິເສດ ດັ່ງນີ້ເປັນຕົ້ນ. ຫລຸດລົງມາ ກໍເກັບພາສີປະຊາຊົນ ທຸກຮູບແບບ, ໂດຍສະເພາະໃນປະຈຸບັນ ແມ່ນພາສີທີ່ດິນ ພາໃຫ້ປະຊາຊົນ ເດືອດຮ້ອນ! ໃຜຢູ່ບ່ອນໃດ ກໍສໍ້ໂກງກິນຢູ່ບ່ອນຫັ້ນ!...

ທ່ານ ໜູຮັກ ພູມສວັນ ເມື່ອຍັງມີຊີວິດຢູ່ ກໍໄດ້ເຕືອນທ່ານ ຄໍາໄຕ ສີພັນດອນ ໃນເຊື່ງຄໍາຖາມ ວ່າ "*ເຈົ້າບໍ່ພໍແລ້ວບໍ ແຖວຫລີ່ຜີ ດອນພະເພັງນັ້ນ?*" ຄົງຈະເປັນເພາະ ທ່ານ ໜູຮັກ ພູມສວັນ ບໍ່ມີ ຫລາຍຮ້ອຍລ້ານດອນລາ ຄືກັບທ່ານ ຄໍາໄຕ ກໍເປັນໄດ້!

ການທີ່ທ່ານທູດວ່າ ບໍ່ມີນະໂຍບາຍປາບປາມ, ມີແຕ່ໂກ່ເກັ່ງ ສຶກສາອົບລົມນັ້ນ, ພວກເຮົາເຫັນວ່າ ຜູ້ທີ່ສ້າງບັນຫາພັຍສັງຄົມ ໃນປະຈຸບັນນີ້, ລ້ວນແລ້ວແຕ່ແມ່ນລູກຫລານ ຂອງຄນະພັກຣັດ ຜູ້ມີ ອໍານາດ ອິດທິພົນເຖື່ອນ, ຊຶ່ງມັນແຕກຕ່າງ ກັບເວລາທີ່ເຂົ້າມາມີອໍານາດໃໝ່ໆ, ຕ້ອງປາບປາມຈັບກຸມ ຄຸມຂັງ ແລະກວາດຕ້ອນ ເອົາໄປດັດສ້າງຢູ່ ດອນທ້າວ ດອນນາງ ເພາະທັງໝົດນັ້ນ ເປັນລູກຫລານ ຂອງປະຊາຊົນ, ບໍ່ແມ່ນລູກຫລານ ຂອງພັກຣັດ, ພວກເຂົາຈຶ່ງຖືປາບປາມຢ່າງໜັກ!.

ຄໍາຖາມສຸດທ້າຍ ຂອງທ່ານ ດວງວີ ປະຖົມມະດວງສີ ກ່ຽວກັບ ໃຫ້ຄົນລາວ ຖືສອງສັນຊາດ ແລະ ວີຊາ ແບບຍາວນານນັ້ນ, ທ່ານທູດຕອບວ່າ "ຍັງບໍ່ທັນມີ, ເຖິງແມ່ນ ວຽດນາມແລະຂມເມນ ຈະໄດ້ ເຮັດແລ້ວກໍຕາມ...*ເພາະພວກເຮົາ ບໍ່ແມ່ນ ວຽດນາມ, ບໍ່ແມ່ນ ຂມເມນ!* ".

ມັນເປັນໜ້າປລາດໃຈທີ່ສຸດ! ທີ່ພັກຣັດ ວຽງຈັນ ອ້າງວ່າ ຕົນມີຄວາມຮັກຊາດແພງເຊື້ອ, ບໍ່ໄດ້ ເຊັ່ນຂ້າປະຊາຊົນ... ແຕ່ມີຄວາມຢ້ານກົວ, ບໍ່ມີຄວາມກ້າຫານ ໃຫ້ປະຊາຊົນລາວ ຖືສອງສັນຊາດ ແລະ ວີຊາເຂົ້າ ແບບຍາວນານໄດ້... ທັງໆທີ່ຄົນລາວ ຖືສາສນາພຸດ ເປັນຄົນດີ ມີສີລທັມ.

ວຽດນາມ, ກໍເຮັດສົງຄາມລ້າງຜານກັນ ມາຍາວນານ ແລະຂມເມນ ທົ່ວໂລກ ກໍຮັບຮູ້ ວ່າ ມີການ ຂ້າໂຫດ, ລ້າງເຜົ່າພັນ...ແຕ່ພວກເຂົາ ກໍຍັງໃຫ້ປະຊາຊົນ ຂອງພວກເຂົາ ຖືສອງສັນຊາດແລະວີຊາ ແບບຍາວນານໄດ້. ການທີ່ພັກຣັດ ວຽງຈັນ ບໍ່ສາມາດທໍາໄດ້.... ແມ່ນໃຜຈະເຊື່ອໄດ້ວ່າ "ພັກຣັດ ບໍ່ໄດ້ສ້າງ ໂທດກັມ ໄວ້ກັບຊາດ ກັບປະຊາຊົນ?. ສົມຄວນແລ້ວ, ທີ່ພັກຣັດ ວຽງຈັນ ຕ້ອງປ່ຽນຣັດຖບານໂດຍໄວ ເພື່ອພິສູດ ເຖິງຄວາມບໍຣິສຸດ ຂອງຕົນ.

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໒໒ ກຸມພາ ໒໐໐໙**